PetroTrade
ບໍລິສັດ ປິໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ
PETROLEUM TRADING LAO PUBLIC COMPANY
ຖະໜົນ: ກຳແພງເມືອງ, ບ້ານໂພນທັນ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສ ປ ປ ລາວ ໂທ: 856 21 264834-5 ແຟັກ: 856021 264836
Kampheangmueng Rd, Phonthan Village, Xaysettha District, Vientiane Capital, Lao P.D.R, Tel: 856 21 264834-5, Fax: 856021 264836

ເລກທີ: 024 /ປທລ/2025
ນະຄອນຫຼວງວຽງຈັນ, ວັນທີ: 30 ເມສາ 2025

ຮຽນ: ທ່ານ ຫົວໜ້າ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
ທ່ານ ຜູ້ອຳນວຍການໃຫຍ່ ຕະຫຼາດຫຼັກຊັບລາວ;
ທ່ານ ຜູ້ຖືຮຸ້ນ ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ.

ເລື່ອງ: ການແຈ້ງມະຕິກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2024 ຂອງ ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ.

- ອີງຕາມຂໍ້ຕົກລົງ ວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 15/ຄຄຊ, ລົງວັນທີ 11 ທັນວາ 2024;
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 008/ຕລຊລ, ລົງວັນທີ 27 ກັນຍາ 2018.

ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (ປທລ) ໄດ້ຈັດກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2024 ເມື່ອວັນທີ 30 ເມສາ 2025 ເວລາ 09:10 ໂມງ ທີ່ຫ້ອງປະຊຸມໃຫຍ່ ຊັ້ນ 8, ອາຄານຕະຫຼາດຫຼັກຊັບລາວ, ຖະໜົນ ກຳແພງເມືອງ ບ້ານ ໂພນທັນ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ. ໂດຍມີຜູ້ຖືຮຸ້ນເຂົ້າຮ່ວມປະຊຸມ ທັງໝົດ 9 ທ່ານ ໃນນັ້ນ ຜູ້ຖືຮຸ້ນເຂົ້າຮ່ວມດ້ວຍຕົນເອງ ຈຳນວນ 5 ທ່ານ ແລະ ຜູ້ຖືຮຸ້ນທີ່ມອບສິດໃຫ້ຜູ້ຕາງໜ້າເຂົ້າຮ່ວມປະຊຸມແທນ ຈຳນວນ 4 ທ່ານ, ເຊິ່ງຖືຮຸ້ນລວມກັນທັງໝົດ 198.354.990 ຮຸ້ນ, ເທົ່າກັບ 84,41% ຂອງ ຈຳນວນຮຸ້ນທັງໝົດຂອງບໍລິສັດ ໂດຍທີ່ປະຊຸມໄດ້ມີມະຕິດັ່ງນີ້:

1. ພິຈາລະນາ ແລະ ຮັບຮອງເອົາ ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2023

ກອງປະຊຸມໄດ້ລົງມະຕິເຫັນດີດ້ວຍສຽງເປັນເອກະພາບ ໂດຍມີຄະແນນສຽງດັ່ງນີ້:

- ເຫັນດີ 198.354.990 ສຽງ ຄິດເປັນ 100 %;
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %;
- ລວມ 198.354.990 ສຽງ ຄິດເປັນ 100 %.

2. **ພິຈາລະນາ ແລະ ຮັບຮອງເອົາ ບົດລາຍງານຜົນການດຳເນີນທຸລະກິດ ປະຈຳປີ 2024 ແລະ ເອກະສານລາຍງານການເງິນທີ່ຜ່ານການກວດສອບຂອງຜູ້ກວດສອບພາຍນອກ ປະຈຳປີ 2024**

ກອງປະຊຸມໄດ້ລົງມະຕິເຫັນດີດ້ວຍສຽງເປັນເອກະພາບ ໂດຍມີຄະແນນສຽງດັ່ງນີ້:

- ເຫັນດີ 198.354.990 ສຽງ ຄິດເປັນ 100 %;
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %;
- ລວມ 198.354.990 ສຽງ ຄິດເປັນ 100 %.

3. **ພິຈາລະນາ ແລະ ຮັບຮອງບໍ່ໃຫ້ມີການປັນຜົນ ຈາກຜົນການດຳເນີນທຸລະກິດປະຈຳປີ 2024 ເນື່ອງມາຈາກບໍລິສັດຂາດທຶນສະສົມໃນຊຸມປີຜ່ານມາ**

ກອງປະຊຸມໄດ້ລົງມະຕິເຫັນດີດ້ວຍສຽງເປັນເອກະພາບ ໂດຍມີຄະແນນສຽງດັ່ງນີ້:

- ເຫັນດີ 198.354.990 ສຽງ ຄິດເປັນ 100 %;
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %;
- ລວມ 198.354.990 ສຽງ ຄິດເປັນ 100 %.

4. **ພິຈາລະນາ ແລະ ຮັບຮອງແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2025**

ກອງປະຊຸມໄດ້ລົງມະຕິເຫັນດີດ້ວຍສຽງເປັນເອກະພາບ ໂດຍມີຄະແນນສຽງດັ່ງນີ້:

- ເຫັນດີ 198.354.990 ສຽງ ຄິດເປັນ 100 %;
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %;
- ລວມ 198.354.990 ສຽງ ຄິດເປັນ 100 %.

5. **ພິຈາລະນາ ແລະ ຮັບຮອງ ແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກຄື ບໍລິສັດ PriceWaterhouseCooper (Lao) Sole Co., Ltd ("PwC") ພ້ອມທັງກຳນົດຄ່າຈ້າງ ປະຈຳປີ 2025 ບໍ່ເກີນ 37.000 ໂດລາສະຫະລັດ**

ກອງປະຊຸມໄດ້ລົງມະຕິເຫັນດີດ້ວຍສຽງເປັນເອກະພາບ ໂດຍມີຄະແນນສຽງດັ່ງນີ້:

- ເຫັນດີ 198.354.990 ສຽງ ຄິດເປັນ 100 %;
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %;
- ລວມ 198.354.990 ສຽງ ຄິດເປັນ 100 %.

6. **ພິຈາລະນາ ແລະ ຮັບຮອງ ການລາออกจากตำแหน่ง ສະມາຊິກສະພາບໍລິຫານ ອິດສະລະ ປທລ ຂອງ ທ່ານ ວຽງ ຄອນ ສິດທິໄຊ**

ກອງປະຊຸມໄດ້ລົງມະຕິເຫັນດີດ້ວຍສຽງເປັນເອກະພາບ ໂດຍມີຄະແນນສຽງດັ່ງນີ້:

- ເຫັນດີ 198.354.990 ສຽງ ຄິດເປັນ 100 %;
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %;
- ລວມ 198.354.990 ສຽງ ຄິດເປັນ 100 %.

7. ພິຈາລະນາ ແລະ ຮັບຮອງ ທ່ານ ຈຳປາ ຄຳສຸກໃສ ເປັນ ສະມາຊິກສະພາບໍລິຫານ ອີກສະລະ

ກອງປະຊຸມໄດ້ລົງມະຕິເຫັນດີດ້ວຍສຽງເປັນເອກະພາບ ໂດຍມີຄະແນນສຽງດັ່ງນີ້:

- ເຫັນດີ 198.354.990 ສຽງ ຄິດເປັນ 100 %;
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %;
- ລວມ 198.354.990 ສຽງ ຄິດເປັນ 100 %.

ໃນກອງປະຊຸມສາມັນຜູ້ຖືຮຸ້ນບໍ່ມີຂໍ້ພິຈາລະນາເພີ່ມເຕີມ, ປະທານກອງປະຊຸມ ຈຶ່ງກ່າວປິດກອງປະຊຸມ ໃນເວລາ 11:05 ໂມງ.

ດັ່ງນັ້ນ, ຈຶ່ງຮຽນມາຍັງທ່ານບັນດາທ່ານເພື່ອຮັບຊາບ.

ດ້ວຍຄວາມເຄົາລົບ ແລະ ນັບຖື,

ປະທານກອງປະຊຸມ

ບໍລິສັດ ປິໂຕຣລຽມເທຣດດິ້ງ ລາວ ມະຫາຊົນ Petroleum Trading Lao Public Company

ສາ ວຽງແກ້ວ